ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການເຄື່ອນໄຫວທຸລະກິດເງິນຕາ ແລະ ດຳເນີນທຸລະກຳ ທີ່ມີພຶດຕິກຳຂັດຕໍ່ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ

ໃນການດຳເນີນທຸລະກິດເງິນຕາຕ່າງປະເທດ ຢູ່ ສປປ ລາວ ໃນປະຈຸບັນ, ໄດ້ມີຮ້ານແລກປ່ຽນເງິນຕາຫຼາຍແຫ່ງທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອດຳເນີນທຸລະກິດແລກປ່ຽນເງິນຕາໃຫ້ຖືກຕ້ອງຕາມ **ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.** ຈຸດປະສົງ ກໍເພື່ອອຳນວຍຄວາມສະດວກໃຫ້ແກ່ການຊື້-ຂາຍສິນຄ້າ ແລະ ການບໍລິການ, ການເຄື່ອນໄຫວທຸລະກິດ ແລະ ດຳເນີນທຸລະກຳຕ່າງໆ.

ບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງດຳເນີນທຸລະກິດເງິນຕາຕ່າງປະເທດຢູ່ ສປປ ລາວ, ຕ້ອງໄດ້ຍື່ນຄຳຮ້ອງ ແລະ ເອກະສານປະກອບເພື່ອຂໍອະນຸຍາດດຳເນີນທຸລະກິດເງິນຕາຕ່າງປະເທດ ຕາມຂັ້ນຕອນ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ ວາງອອກ, ແຕ່ໃນສະພາບປະຈຸບັນຍັງມີປະກົດການດຳເນີນທຸລະກິດຮ້ານແລກປ່ຽນ ແລະ ການແລກປ່ຽນເງິນຕາທີ່ຜິດກົດໝາຍເກີດຂຶ້ນຢ່າງຫຼວງຫຼາຍເປັນຕົ້ນແມ່ນ:

- ການຮັບແລກປ່ຽນເຖື່ອນ (ບໍ່ໄດ້ຮັບອະນຸຍາດ) ຂອງຜູ້ປະກອບການ, ບຸກຄົນ ແລະ ກຸ່ມບຸກຄົນຕ່າງໆ;
- ການກຳນົດອັດຕາແລກປ່ຽນທີ່ບໍ່ເປັນໄປຕາມການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຂອງຮ້ານແລກປ່ຽນເງິນຕາ;
- ການປັ່ນປ່ວນອັດຕາແລກປ່ຽນໂດຍການກັກຕຸນເງິນຕາຕ່າງປະເທດ ຫຼື ການເກັ່ງກຳໄລໂດຍບໍ່ສົມເຫດສົມຜົນ.

ຕໍ່ບັນຫາດັ່ງກ່າວສ້າງຄວາມຫຍຸ້ງຍາກຕໍ່ເສດຖະກິດເງິນຕາ, ສະພາບອັດຕາແລກປ່ຽນ ແລະ ລາຄາສິນຄ້າພາຍໃນຊຶ່ງສິ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນລວມທັງຕົ້ນທຶນການຜະລິດ ກໍສູງຂຶ້ນເປັນເງົາຕາມຕົວ.

ສະນັ້ນ, ການດຳເນີນທຸລະກິດເງິນຕາຕ່າງປະເທດ, ທີ່ບໍ່ໄດ້ຮັບອະນຸຍາດ, ການກຳນົດ ແລະ ປະກາດອັດຕາແລກປ່ຽນໂດຍບໍ່ສອດຄ່ອງກັບອັດຕາແລກປ່ຽນອ້າງອີງຂອງທະນາຄານແຫ່ງ ສປປ ລາວ, ການປັ່ນປ່ວນອັດຕາແລກປ່ຽນທີ່ສ້າງຜົນກະທົບຕໍ່ເສດຖະກິດແມ່ນເປັນການລະເມີດ**ມາດຕາ 28 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະເມີດກົດໝາຍອາຍາ, ມາດຕາ 285 ວ່າດ້ວຍການລະເມີດລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ມາດຕາ 279 ວ່າດ້ວຍການດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ.**

ເພື່ອເຮັດໃຫ້ການດຳເນີນທຸລະກິດການແລກປ່ຽນເຂົ້າສູ່ລະບົບລະບຽບ, ປະກອບສ່ວນເຂົ້າໃນການຄຸ້ມຄອງເສດຖະກິດຂອງຊາດ, ບັນດາຮ້ານແລກປ່ຽນຕ້ອງປະຕິບັດລະບຽບກົດໝາຍຢ່າງເປັນເຈົ້າການ ແລະ ປະຊາຊົນ ແລະ ຜູ້ປະກອບການທຸລະກິດຕ່າງໆ ມີພັນທະຕ້ອງແລກປ່ຽນເງິນຕາຂອງຕົນນຳທະນາຄານ ຫຼື ຮ້ານແລກປ່ຽນທີ່ດຳເນີນການຖືກຕ້ອງຕາມກົດໝາຍ ຊຶ່ງຜູ້ແລກປ່ຽນເງິນຕາສາມາດເບິ່ງໄດ້ຈາກໃບອະນຸຍາດດຳເນີນທຸລະກິດ ທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ຕິດ ຫຼື ເປີດເຜີຍໃນຮ້ານແລກປ່ຽນນັ້ນໆ ພ້ອມນີ້ເຈົ້າໜ້າທີ່ກ່ຽວຂ້ອງຕ່າງໆ ທີ່ມີໜ້າທີ່ສອດສ່ອງດູແລ ແລະ ບັງຄັບໃຊ້ກົດໝາຍ ເຮັດແນວໃດໃຫ້ປະເທດລາວກາຍເປັນລັດແຫ່ງກົດໝາຍຕາມທີ່ພັກ ແລະ ລັດໄດ້ວາງອອກ.

**#ໂດຍ: ນາງ ສອນໄຊ ສີຫາເທບ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ.**